# ທ່ານຕ້ອງການຄວາມຊ່ວຍເຫຼືອເນື່ອງຈາກຄວາມພິການບໍ?

**ທ່ານມີຄວາມຫຍຸ້ງຍາກບໍໃນການຈະຮ້ອງຂໍຜົນປະໂຫຍດ?**

**ທ່ານມີຄວາມຫຍຸ້ງຍາກບໍໃນການຈະດຳເນີນການຮັກສາຜົນປະໂຫຍດຂອງທ່ານ?**

ທາງກະຊວງອາດຈະສາມາດຊ່ວຍທ່ານໄດ້. ພາຍໃຕ້ກົດໝາຍທີ່ເອີ້ນວ່າຄົນອະເມຣິກັນກັບກົດໝາຍກ່ຽວກັບຄົນພິການ (ADA) ນັ້ນ, ທາງກະຊວງສາມາດໃຫ້ການຊ່ວຍເຫຼືອພິເສດກັບທ່ານທີ່ເອີ້ນວ່າ ທີ່ພັກພາອາໃສ. ທີ່ພັກພາອາໃສຕາມ  ADA ສາມາດເຮັດໃຫ້ການເຮັດວຽກຂອງທ່ານກັບທາງກະຊວງງ່າຍຂຶ້ນ.

**ມີຜູ້ໃດແດ່ທີ່ຈະສາມາດໄດ້ຮັບທີ່ພັກພາອາໃສ? ມີທີ່ພັກພາອາໃສອັນໃດແດ່ທີ່ມີຢູ່?**

ຖ້າທ່ານມີສະພາບທາງດ້ານຮ່າງກາຍ ແລະຈິດໃຈທີ່ເຮັດໃຫ້ທ່ານລຳບາກຕໍ່ການທີ່ຈະເຮັດສິ່ງໃດສິ່ງນຶ່ງ, ທ່ານອາດຈະມີສິດຕໍ່ການໄດ້ຮັບທີ່ພັກພາອາໃສຕາມ ADA.

ຕົວຢ່າງ: ຖ້າທ່ານມີສະພາບທາງດ້ານຮ່າງກາຍທີ່ເຮັດໃຫ້ທ່ານໄປຫ້ອງການລຳບາກ, ພວກເຮົາສາມາດໄປຫາທ່ານຢູ່ທີ່ບ້ານ ຫືຈັດຕາຕະລາງການນັດໝາຍທາງໂທລະສັບ.

ຖ້າທ່ານມີຄວາມພິການທາງດ້ານການຮຽນຮູ້ ທີ່ເຮັດໃຫ້ທ່ານມີຄວາມຫຍຸ້ງຍາກທີ່ຈະເຂົ້າໃຈເລື່ອງແຈ້ງການຂອງພະແນກ, ຜູ້ຈັດການເລື່ອງຂອງທ່ານສາມາດອະທິບາຍໃຫ້ທ່ານໄດ້.

ຖ້າທ່ານມີຄວມຫຍຸ້ງຍາກທີ່ຈະເຂົ້າໃຈແບບຟອມຂອງທາງກະຊວງ, ຜູ້ຈັດການເລື່ອງຂອງທ່ານຍັງສາມາດຊ່ວຍປະກອບແບບຟອມນັ້ນໃຫ້ທ່ານໄດ້.

ຖ້າທ່ານມີບັນຫາໃນການຈື່ຈຳສິ່ງຕ່າງໆ, ພວກເຮົາສາມາດຮັບປະກັນໃນເລື່ອງການເຕືອນໃຈທ່ານ.

ມີທີ່ພັກພາອາໃສຫຼາຍປະເພດພ້ອມໃຫ້ທ່ານຢູ່.

**ທ່ານຈະໄດ້ທີ່ພັກພາອາໃສມາໄດ້ແນວໃດ? ໃຫ້ຊອກຖາມໄດ້!**

ຖ້າທ່ານຄິດວ່າ ທ່ານຕ້ອງການຄວາມຊ່ວຍເຫຼືອພິເສດ ແມ່ນໃຫ້ບອກກັບຜູ້ຈັດການເລື່ອງຂອງທ່ານ. ຜູ້ຈັດການເລື່ອງຂອງທ່ານສາມາດຊ່ວຍທ່ານໄດ້. ຜູ້ຈັດການເລື່ອງຂອງທ່ານຈະເຮັດວຽກກັບທ່ານ ແລະທີມງານທີ່ພັກອາໃສຕາມ ADA ຂອງຫ້ອງການ ເພື່ອຊອກຫາວິທີທາງທີ່ດີສຸດທີ່ຈະຊ່ວຍເຫຼືອ.

**ສະມາຊິກທີມທີ່ພັກອາໃສຕາມ ADA:**

_________________________________________________________________________

ຖ້າທ່ານບໍ່ໄດ້ຮັບຄວາມຊ່ວຍເຫຼືອທີ່ທ່ານຕ້ອງການ, ທ່ານສາມາດຂໍໃຫ້ທີມທີ່ພັກພາອາໃສຂອງຫ້ອງການກາງເຮັດການທົບທວນຄືນເບິ່ງຄຳສະເໜີຂອງທ່ານ. ຫຼັງຈາກການທົບທວນຄືນນີ້ແລ້ວ, ທ່ານອາດຈະເຮັດການອຸທອນຫາພະແນກພິຈາລະນາຄະດີ.

**ການຄັດເລືອກເອົາຜູ້ພິການໃນການເຂົ້າຮຽນໂດຍບໍ່ໄດ້ເສຍຄ່າ!**

ທ່ານມີບັນຫາໃນດ້ານການອ່ານ, ການຂຽນ, ການຈື່ ຫຼືການເຂົ້າໃຈບໍ? ອັນນີ້ເຮັດໃຫ້ທ່ານມີຄວາມຫຍຸ້ງຍາກຢູ່ໃນໂຮງຮຽນ ຫຼືບ່ອນເຮັດວຽກບໍ? ຖ້າມີ, ທ່ານອາດຈະຕ້ອງການເປັນຜູ້ນຶ່ງໃນການຄັດເລືອກເອົາຜູ້ພິການເຂົ້າໃນການຮຽນໂດຍບໍ່ໄດ້ເສຍຄ່າສຳລັບຜູ້ສະໝັກ ຫຼືຜູ້ໄດ້ຮັບ TAFDC.

ການຄັດເລືອກແມ່ນຂັ້ນຕອນທຳອິດທີ່ຈະໄດ້ຮັບການຊ່ວຍເຫຼືອ. ຖ້າຫາກເປັນໄປໄດ້ວ່າ ທ່ານອາດຈະມີຄວາມພິການໃນການຮຽນຮູ້, ພວກເຮົາຈະຈ່າຍຄ່າທົບທວນຄືນເບິ່ງທັງໝົດ. ການທົບທວນຄືນເບິ່ງນີ້ຍັງເອີ້ນວ່າການປະເມີນ ເຊິ່ງຈະລວມມີຄຳເຫັນແນະນຳຕໍ່ການບໍລິການ ແລະຄຳເຫັນແນະນຳທີ່ສາມາດຊ່ວຍທ່ານເຂົ້າເຖິງວຽກ ແລະເປົ້າໝາຍການຮຽນຮູ້ຂອງທ່ານໄດ້. **ຂໍຮ້ອງໃຫ້ເຂົ້າເຮັດການຄັດເລືອກແຕ່ມື້ນີ້ໄປ!**

Believing you can. www.mass.gov/dta

OCR-1 Flyer - Laotian (7/2010)
26-417-0710-05